ສະໜັບສະໜູນການສ້າງຕົ້ນສະບັບ
ໂດຍ: ອົງການຮ່ວມມືສາກົນ UNICEF ປະຈຳລາວ
ສະໜັບສະໜູນການພິມໂດຍ: ງົບປະມານແຫ່ງລັດ (ບ້ວງນ້ຳເທີນ 2)
ທະບຽນພິມເລກທີ: ...............
ຂະໜາດ 21x29,7 ຊມ ຈຳນວນ.............ຫົວ
ພິມທີ່ ບໍລິສັດ ລັດວິສາຫະກິດໂຮງພິມສຶກສາ
2016

ປຶດເຝິກຫັດ ໜ່ວຍການຄົນມະນາຄົມ ແລະ ການສື່ສານ ຊັ້ນອະນຸບານສຶກສາ ປີທີ 3 2016

# ປຶດເຝິກຫັດ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາປີທີ 3




ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

## ປຶ້ມຝຶກຫັດ

# ໜ່ວຍການຄົມມະນາຄົມ ແລະ ການສື່ສານ

## ຊັ້ນອະນຸບານສຶກສາ ປີທີ 3


ຮຽບຮຽງໂດຍ: ແສງມະນີ ສຸພັນທະລົບ

ກວດແກ້ໂດຍ: ອ່ອນແກ້ວ ນວນນະວົງ
ປາກຽນ ຫຼວງໄຊຊະນະ
ເກດ ພັນລັກ

ພິມ ແລະ ເອົ້າໜ້າໂດຍ: ທອງດຳ ທອງສິນ
ສີວິໄລ ແກ້ວມະນີວັນ



ກະຊວງສຶກສາທິການ ແລະ ກິລາ
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
2016

# ຄຳນຳ

ການກຽມຄວາມພ້ອມຂັ້ນພື້ນຖານທາງດ້ານວິທະຍາສາດເປັນເລື່ອງທີ່ຈຳເປັນ ແລະ ມີຄວາມສຳຄັນຕໍ່ການຮຽນວິທະຍາສາດໃນຊັ້ນປະຖົມ. ການສ້າງຄວາມຮູ້ຄວາມເຂົ້າໃຈຂັ້ນພື້ນຖານທາງດ້ານຄວາມຮູ້ທົ່ວໄປກ່ຽວກັບວິທະຍາສາດໃຫ້ແກ່ເດັກນ້ອຍ ດ້ວຍກິດຈະກຳທີ່ມີຄວາມມ່ວນຊື່ນກະຕຸ້ນໃຫ້ເດັກນ້ອຍໄດ້ສັງເກດ, ທົດລອງ, ຄົ້ນຄິດ ມີເຫດຜົນໃນການແກ້ໄຂບັນຫາຈະຊ່ວຍໃຫ້ເດັກນ້ອຍມັກ ແລະ ສົນໃຈຮຽນວິທະຍາສາດຫຼາຍຂຶ້ນ.

ປຶ້ມບົດເຝິກຫັດໜ່ວຍການຄົມມະນາຄົມ ແລະ ການສື່ສານເຫຼັ້ມນີ້ຮຽບຮຽງຂຶ້ນ ເພື່ອເຝິກແອບທັກສະການສັງເກດ ແລະ ແອບເວົ້າຄຳສັບທີ່ນຳໃຊ້ໃນຊີວິດປະຈຳວັນ ແລະ ຄຳສັບວິທະຍາສາດ ທີ່ສອດຄ່ອງກັບມາດຖານສະມັດຖະພາບດ້ານການກຽມຄວາມພ້ອມທາງດ້ານວິທະຍາສາດສຳລັບເດັກນ້ອຍອາຍຸ 5 ປີ.

ປຶ້ມບົດເຝິກຫັດເຫຼັ້ມນີ້ປະກອບດ້ວຍ 4 ຫົວຂໍ້ເນື້ອໃນທີ່ນຳມາເຝິກແອບເວົ້າຄຳສັບພື້ນຖານກ່ຽວກັບເລື່ອງບ້ານມີດັ່ງນີ້:

1. ການເດີນທາງ.
2. ການເດີນທາງໃນອາກາດ ແລະ ທາງນ້ຳ.
3. ການສື່ສານ.
4. ການປະຕິບັດຕົນໃນເວລາສື່ສານ.

ການນຳໃຊ້ປຶ້ມບົດເຝິກຫັດເຂົ້າໃນການກຽມຄວາມພ້ອມໃນການຮຽນຮູ້ທາງດ້ານວິທະຍາສາດໃຫ້ມີຄຸນນະພາບຄູສອນ ແລະ ຜູ້ປົກຄອງຄວນໃຊ້ພາຍຫຼັງທີ່ເດັກນ້ອຍໄດ້ຮຽນຮູ້ສິ່ງທີ່ມີໃນກິດຈະກຳວົງມົນຜ່ານມາແລ້ວ, ພ້ອມກັນນັ້ນນາຍຄູ ແລະ ຜູ້ປົກຄອງຊ່ວຍແນະນຳໃຫ້ເດັກນ້ອຍ ໄດ້ເຝິກທັກສະການເວົ້າຊື່ທີ່ມີໃນຮູບພາບ ແລະ ການທາສີຮູບຕາມເນື້ອໃນທີ່ມີໃນປຶ້ມຫົວນີ້ດ້ວຍຕົນເອງໃຫ້ຫຼາຍຂຶ້ນ.

ພ້ອມດຽວກັນນີ້ຄະນະຮັບຜິດຊອບໃນການປັບປຸງ ແລະ ຮຽບຮຽງປຶ້ມຄູ່ມືຄູສະບັບນີ້ມີຄວາມຍິນ ດີເປັນຢ່າງຍິ່ງຮັບເອົາທຸກຄຳຄິດເຫັນຂອງບັນດາທ່ານ ເພື່ອປັບປຸງປຶ້ມບົດເຝິກຫັດດັ່ງກ່າວໃຫ້ມີຄຸນນະພາບດີຂຶ້ນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

## ສາລະບານ

ຫົວຂໍ້ ໜ້າ


ການຄົມມະນາຄົມ ແລະ ການສື່ສານ........ 1

**1. ການເດີນທາງ ອາທິດທີ 1........ 2**

- ການເດີນທາງທາງນ້ຳ ແລະ ທາງອາກາດ........ 3
- ການເດີນທາງໃນທາງບົກ. ........ 4
- ການຍ່າງ........ 5
- ປະເພດລົດຖີບ. ລົດຈັກ, ລົດໃຫຍ່........ 6
- ລົດຖີບ........ 7
- ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດຖີບ........ 8
- ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຖີບ........ 9
- ລົດຈັກ........ 10
- ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດຈັກ........ 11
- ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຈັກ........ 12
- ລົດໃຫຍ່........ 13
- ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດໃຫຍ່........ 14
- ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດໃຫຍ່........ 15

**2. ການເດີນທາງໃນທາງອາກາດ ແລະ ທາງນ້ຳ ອາທິດທີ 2........ 16**

- ເຮືອບິນນ້ອຍ........ 17
- ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນນ້ອຍ........ 18
- ເຮືອບິນໃຫຍ່........ 19
- ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນໃຫຍ່........ 20
- ການປະຕິບັນຕົນໃນການເດີນທາງທາງອາກາດ........ 21
- ປະເພດ, ສ່ວນປະກອບ ແລະ ຄຸນປະໂຫຍດຂອງເຮືອ........ 22
- ການປະຕິບັດຕົນໃນການເດີນທາງໃນທາງນ້ຳ........ 23

**3. ການສື່ສານ ອາທິດທີ 3........ 24**

- ປະເພດຂອງການສື່ສານ........ 25
- ສ່ວນປະກອບ, ຄຸນປະໂຫຍດຂອງໂທລະສັບຕັ້ງໂຕະ ແລະ ການປະຕິບັດຕົນ........ 26
- ໂທລະພາບ........ 27
- ຄຸນປະໂຫຍດຂອງໂທລະພາບ ແລະ ການປະຕິບັດຕົນ........ 28
- ຄອມພິວເຕີ........ 29

- ຄຸນປະໂຫຍດຂອງຄອມພິວເຕີ ແລະ ການປະຕິບັດຕົນ........................................................ 30
- ຈົດໝາຍ........................................................................................................................ 31

**4. ການປະຕິບັດຕົນໃນເວລາສື່ສານ ອາທິດທີ 4........................................................................ 32**

- ການເວົ້າ........................................................................................................................ 33
- ການຟັງ......................................................................................................................... 34
- ການອ່ານ........................................................................................................................ 35
- ການຂຽນ ແລະ ການແຕ້ມ.................................................................................................. 36

# ການຄົມມະນາຄົມ ແລະ ການສື່ສານ









**ຫົວຂໍ້ການຮຽນຂອງແຕ່ລະອາທິດໜ່ວຍການຄົມມະນາຄົມ ແລະ ການສື່ສານປະກອບມີ**

1. ການເດີນທາງ.
2. ການເດີນທາງໃນອາກາດ ແລະ ທາງນໍ້າ.
3. ການສື່ສານ.
4. ການປະຕິບັດຕົນໃນເວລາສື່ສານ.

# ການເດີນທາງ












**ຫົວຂໍ້ການຮຽນອາທິດທີ 1 ການເດີນທາງ**

1. ການເດີນທາງໃນທາງບົກ, ທາງນ້ຳ ແລະ ທາງອາກາດ
2. ການເດີນທາງໃນທາງບົກ.
3. ລົດຖີບ.
4. ລົດຈັກ.
5. ລົດໃຫຍ່.

# ການເດີນທາງໃນທາງບົກ, ທາງນ້ຳ ແລະ ທາງອາກາດ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງການເດີນທາງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເດີນທາງໃນທາງໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເດີນທາງມີ 3 ປະເພດເຊັ່ນ: ການເດີນທາງມີທາງບົກ, ທາງ ນ້ຳ, ທາງອາກາດ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອບິນ, ເຮືອ ແລະ ລົດໂດຍນຳໃຊ້ສີຕາມໃຈ.

# ການເດີນທາງໃນທາງບົກ









**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເດີນທາງໃນທາງບົກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ບ້ານຫຼານຢູ່ໃກ້ ຫຼື ໄກໂຮງຮຽນ? ພໍ່ແມ່ຍ່າງມາສົ່ງ ຫຼື ຂີ່ລົດມາສົ່ງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເດີນທາງທາງບົກປະກອບມີການຍ່າງ ແລະ ການຂີ່ລົດຖີບ, ລົດຈັກ, ລົດໃຫຍ່.
- ໃຫ້ເດັກນ້ອຍທາສີຮູບພາບຄົນຍ່າງ, ລົດຖີບ, ລົດຈັກ, ລົດໃຫຍ່ໂດຍນຳໃຊ້ສີຕາມໃຈ.

# ການຍ່າງ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຍ່າງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ການຍ່າງຄວນຍ່າງແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຕ້ອງຍ່າງເບື້ອງຂວາມືຂອງຄົນ, ຍ່າງຂ້າມທາງມ້າລາຍ ຫຼື ບ່ອນທີ່ມີໄຟອຳອາດ, ບໍ່ຍ່າງກາງທາງ ແລະ ໄລ່ຢອກກັນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍຍ່າງ ແລະ ລົດ ໂດຍນຳໃຊ້ສີຕາມໃຈ.

# ປະເພດລົດຖີບ, ລົດຈັກ, ລົດໃຫຍ່







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງລົດຖີບ, ລົດຈັກ, ລົດໃຫຍ່ແຕ່ລະຊະນິດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ມີຫຍັງແດ່? ໃນເຮືອນຂອງຫຼານມີລົດຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ປະເພດລົດຖີບ, ລົດຈັກ, ລົດໃຫຍ່ມີຄື: ລົດຖີບປະກອບມີລົດຖີບນ້ອຍ, ໃຫຍ່, ລົດສາມລໍ້ ແລະ ລົດຖີບສາມລໍ້; ລົດຈັກປະກອບມີລົດຈັກສອງລໍ້ ແລະ ລົດສາມລໍ້ ຫຼື ຕຸກຕຸກ ຫຼື ຈໍ້າໂປ້; ລົດໃຫຍ່ປະກອບມີລົດເກງ, ລົກກະບະ, ລົດຕູ້, ລົດເມ.
- ໃຫ້ເດັກນ້ອຍທາສີຮູບພາບລົດໂດຍນຳໃຊ້ສີຕາມໃຈ.

# ລົດຖີບ












**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ລົດຖີບ ແລະ ສ່ວນປະກອບຂອງລົດຖີບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ໃນເຮືອນຂອງຫຼານມີລົດຖີບບໍ? ຖ້າມີແມ່ນລົດຖີບແບບໃດ? ສ່ວນປະກອບຂອງລົດຖີບມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ລົດຖີບມີລົດຖີບຟາມິງໂກ້, ລົດຖີບສະແຕນດາດ, ລົດຖີບບີເອັມເອັກ, ລົດຖີບມີເກຍ; ສ່ວນປະກອບຂອງລົດຖີບມີເຂົາ, ມີອານ, ມີດັ້ວ, ມີຕີນລົດຖີບ ແລະ ມີແຢ່ງ.
- ໃຫ້ເດັກນ້ອຍທາສີຮູບພາບລົດຖີບໂດຍນໍາໃຊ້ສີຕາມໃຈ.

# ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດຖີບ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຄື່ອນທີ່ຂອງລົດຖີບ, ສາມລໍ້ ແລະ ຄຸນປະໂຫຍດ; ເຝິກທັກສະ ການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລົດຖີບ ແລະ ສາມລໍ້ເຄື່ອນທີ່ແນວໃດ? ລົດຖີບໃຊ້ໄວ້ເພື່ອເຮັດຫຍັງ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເຄື່ອນທີ່ຂອງລົດຖີບ ແລະ ສາມລໍ້ເຄື່ອນທີ່ດ້ວຍການໃຊ້ແຮງຄົນຖີບ; ຄຸນປະໂຫຍດຂອງລົດຖີບ ໃຊ້ເດີນທາງໄປມາຫາສູ່ໃນໄລຍະທາງບໍ່ໄກປານໃດ.
- ໃຫ້ເດັກນ້ອຍທາສີຮູບພາບຄົນຂີ່ລົດໂດຍນໍາໃຊ້ສີຕາມໃຈ.

# ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຖີບ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຖີບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ການຂຶ້ນ-ລົງລົດຖີບ ທີ່ຖືກຕ້ອງຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຖີບໃນເວລາລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນໃນເວລາຂີ່ລົດຖີບ, ລະວັງບໍ່ໃຫ້ ຕີນເຂົ້າດັ້ງລົດເວລາຊ້ອນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ລົດຈັກ












**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ລົດຈັກ ແລະ ສ່ວນປະກອບຂອງລົດຈັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຄີຍເຫັນລົດຈັກປະເພດໃດແດ່? ສ່ວນປະກອບຂອງລົດຈັກມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ລົດຈັກມີລົດຈັກຮອນດ້າເວບ100, ລົດ ຈັກຊູຊູກິເລີບ, ລົດຈັກຮອນດ້າດຼີມ ແລະ ລົດຈັກເວບລອງສິງ; ສ່ວນປະກອບຂອງລົດຈັກມີເຂົາ, ອານ, ຕີນລົດຈັກ, ແວ່ນ, ແກ.
- ໃຫ້ເດັກນ້ອຍທາສີຮູບພາບລົດຈັກໂດຍນຳໃຊ້ສີຕາມໃຈ.

# ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດຈັກ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດຈັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ລົດຈັກເຄື່ອນທີ່ແນວໃດ? ລົດຈັກມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເຄື່ອນທີ່ຂອງລົດຈັກແມ່ນເຄື່ອນທີ່ດ້ວຍເຄື່ອງຈັກ; ຄຸນປະໂຫຍດຂອງລົດຈັກໃຊ້ເດີນທາງໄປມາຫາສູ່ກັນສະດວກວ່ອງໄວໃນໄລຍະທາງໃກ້ ແລະ ໄກ.
- ໃຫ້ເດັກນ້ອຍທາສີຮູບພາບລົດຈັກໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຈັກ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຈັກ; ຝຶກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້:ໃນຮູບນີ້ຫຼານເຫັນຫຍັງ? ການຂຶ້ນ-ລົງລົດຈັກ ທີ່ຖືກຕ້ອງຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນເວລາຂຶ້ນ ແລະ ລົງລົດຈັກຕ້ອງໃຫ້ລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນບໍ່ເດ່ແຂນອອກນອກ; ຂີ່ລົດຈັກໃສ່ໝວກກັນກະທົບທັງຄົນຂັບ ແລະ ຜູ້ຊ້ອນທ້າຍ.
- ໃຫ້ເດັກນ້ອຍທາສີຮູບພາບຄົນຂີ່ລົດຈັກໂດຍນຳໃຊ້ສີຕາມໃຈ.

# ລົດໃຫຍ່














**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ລົດໃຫຍ່ ແລະ ສ່ວນປະກອບຂອງລົດໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍເຫັນລົດໃຫຍ່ປະເພດໃດແດ່? ສ່ວນປະກອບຂອງລົດໃຫຍ່ມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ລົດໃຫຍ່ມີລົດເມ, ລົດສອງແຖວ, ລົດເກັງ, ລົດກະບະ ແລະ ລົດຕູ້; ສ່ວນປະກອບຂອງລົດໃຫຍ່ມີພວງມະໄລ, ເບກ, ຄາດ, ຄັດເລັ່ງ, ເບາະນັ່ງ, ຕີນລົດ, ແວ່ນ, ແກ.
- ໃຫ້ເດັກນ້ອຍທາສີຮູບພາບລົດໂດຍນຳໃຊ້ສີຕາມໃຈ.

# ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດໃຫຍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຄື່ອນທີ່ ແລະ ຄຸນປະໂຫຍດຂອງລົດໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບຕາມໃຈ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ລົດໃຫຍ່ເຄື່ອນທີ່ແນວໃດ? ລົດໃຫຍ່ມີຄຸນປະໂຫຍດແນວໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລົດໃຫຍ່ເຄື່ອນທີ່ດ້ວຍເຄື່ອງຈັກ; ຄຸນປະໂຫຍດຂອງລົດໃຫຍ່ໃຊ້ເດີນທາງໄປມາຫາສູ່ກັນ, ຂີ່ໄດ້ຫຼາຍຄົນ, ສະດວກ, ວ່ອງໄວໃນໄລຍະທາງໃກ້ ແລະ ໄກ.
- ໃຫ້ເດັກນ້ອຍທາສີຮູບພາບລົດ ແລະ ຄົນຂີ່ລົດໃຫຍ່ໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການຂຶ້ນ ແລະ ລົງລົດໃຫຍ່





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການຂຶ້ນ ແລະ ລົງລົດໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ການຂຶ້ນ-ລົງລົດໃຫຍ່ທີ່ຖືກຕ້ອງຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການຂຶ້ນ, ລົງລົດໃຫຍ່ຕ້ອງໃຫ້ລົດຈອດກ່ອນ, ນັ່ງ ແລະ ຈັບໃຫ້ແໜ້ນບໍ່ເດ່ແຂນອອກນອກ; ຂີ່ລົດໃຫຍ່ຄວນໃສ່ສາຍຮັດນິລະໄພ.
- ໃຫ້ເດັກນ້ອຍທາສີຮູບພາບລົດ ແລະ ຄົນໂດຍນຳໃຊ້ສີຕາມໃຈ.

# ການເດີນທາງໃນທາງອາກາດ ແລະ ທາງນໍ້າ









**ຫົວຂໍ້ການຮຽນອາທິດທີ 2 ການເດີນທາງໃນທາງອາກາດ ແລະ ທາງນໍ້າ**

1. ເຮືອບິນນ້ອຍ.
2. ເຮືອບິນໃຫຍ່.
3. ການປະຕິບັດຕົນໃນການເດີນທາງໃນທາງອາກາດ.
4. ການເດີນທາງໃນທາງນໍ້າ.
5. ການປະຕິບັດຕົນໃນການເດີນທາງໃນທາງນໍ້າ.

# ເຮືອບິນນ້ອຍ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ ແລະ ສ່ວນປະກອບຂອງເຮືອບິນນ້ອຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນ ເຮືອບິນນ້ອຍປະເພດໃດແດ່? ສ່ວນປະກອບຂອງເຮືອບິນນ້ອຍມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຮືອບິນນ້ອຍມີເຮລິຄອບແຕ; ສ່ວນປະກອບຂອງເຮືອບິນນ້ອຍ ມີໃບພັດ, ເບກ, ຄັດເລັ່ງ, ເບາະນັ່ງ, ຕີນເຮືອບິນ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອບິນໂດຍນໍາໃຊ້ສີຕາມໃຈ.

# ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນນ້ອຍ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນນ້ອຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ຫຼານເຫັນຫຍັງແດ່ໃນຮູບນີ້? ເຮືອບິນນ້ອຍເຄື່ອນທີ່ແນວໃດ? ເຮືອບິນນ້ອຍມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເຄື່ອນທີ່ຂອງເຮືອບິນນ້ອຍແມ່ນ ເຄື່ອນທີ່ດ້ວຍເຄື່ອງຈັກ; ຄຸນປະໂຫຍດຂອງເຮືອບິນໃຊ້ເດີນທາງໄປມາຫາສູ່ກັນທາງອາກາດ, ສະດວກວ່ອງໄວໃນໄລຍະທາງໄກ, ບໍ່ເສຍເວລາຫຼາຍ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອບິນໂດຍນຳໃຊ້ສີຕາມໃຈ.

# ເຮືອບິນໃຫຍ່








**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຊື່ເຮືອບິນໃຫຍ່ ແລະ ສ່ວນປະກອບຂອງເຮືອບິນໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນເຮືອບິນໃຫຍ່ປະເພດໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຊື່ເຮືອບິນໃຫຍ່ມີໂບອິງ, ອາເຕແອ ແລະ ແອບັສ; ສ່ວນປະກອບຂອງເຮືອບິນໃຫຍ່ມີໃບພັດ, ເບກ, ຄັນເລັ່ງ, ເບາະນັ່ງ, ຕີນເຮືອບິນ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອບິນໂດຍນຳໃຊ້ສີຕາມໃຈ.

# ການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນໃຫຍ່



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການເຄື່ອນທີ່ ແລະ ຄຸນປະໂຫຍດຂອງເຮືອບິນໃຫຍ່; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຮືອບິນໃຫຍ່ ເຄື່ອນທີ່ແນວໃດ? ເຮືອບິນໃຫຍ່ມີຄຸນປະໂຫຍດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການເຄື່ອນທີ່ຂອງເຮືອບິນໃຫຍ່ເຄື່ອນທີ່ດ້ວຍເຄື່ອງຈັກ; ຄຸນປະໂຫຍດຂອງເຮືອບິນໃຊ້ ເດີນທາງໄປມາ, ສະດວກ, ວ່ອງໄວໃນໄລຍະທາງໄກ, ປະຢັດເວລາ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອບິນໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການເດີນທາງໃນອາກາດ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການເດີນທາງໃນທາງອາກາດ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເຮົາຄວນປະຕິບັດຕົນແນວໃດໃນການເດີນທາງອາກາດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການເດີນທາງໃນທາງອາກາດຕ້ອງໄປໃຫ້ທັນເວລາ, ບໍ່ລືມກັບສຽງດັງ, ຂຶ້ນ, ລົງເຮືອບິນຕາມລຳດັບ, ບໍ່ຖິ້ມຂີ້ເຫຍື້ອຊະຊາຍ, ປະຕິບັດຕາມກົດລະບຽບຂອງການເດີນທາງ. ນັ່ງຖືກບ່ອນ ແລະ ໃສ່ສາຍຮັດນິລະໄພ.
- ໃຫ້ເດັກນ້ອຍໃຫ້ເດັກນ້ອຍທາສີຮູບພາບເຮືອບິນ ແລະ ຄົນໂດຍນຳໃຊ້ສີຕາມໃຈ.

# ເຮືອ













**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດເຮືອ, ຄຸນປະໂຫຍດ ແລະ ສ່ວນປະກອບຂອງເຮືອພາຍ ເຮືອຈັກ; ການເຄື່ອນທີ່ຂອງເຮືອພາຍ ແລະ ເຮືອຈັກ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້:ໃນຮູບນີ້ຫຼານເຫັນຫຍັງແດ່? ຫຼານເຄີຍເຫັນເຮືອປະເພດໃດແດ່? ສ່ວນປະກອບຂອງເຮືອພາຍ ແລະ ເຮືອຈັກມີຫຍັງແດ່? ເຮືອພາຍ ແລະ ເຮືອຈັກເຄື່ອນທີ່ແນວໃດ? ມີປະໂຫຍດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ປະເພດເຮືອມີເຮືອພາຍ, ເຮືອຈັກ; ສ່ວນປະກອບຂອງເຮືອພາຍ ມີໄມ້ພາຍ, ຂັ້ນນັ່ງ; ການເຄື່ອນທີ່ຂອງເຮືອພາຍເຄື່ອນທີ່ດ້ວຍການໃຊ້ແຮງຄົນພາຍ; ສ່ວນປະກອບຂອງເຮືອຈັກມີຈັກເຮືອ, ຂັ້ນນັ່ງ, ເຄື່ອງຈັກ, ໃບພັດຫາງຍາວ, ມີຫຼັງຄາ; ເຄື່ອນທີ່ດ້ວຍເຄື່ອງຈັກ; ໃຊ້ເດີນ ທາງໄປມາຫາສູ່ກັນທາງນ້ຳ ໃນໄລຍະໃກ້-ໄກ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນການເດີນທາງໃນທາງນໍ້າ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການປະຕິບັດຕົນໃນການເດີນທາງໃນທາງນໍ້າ;ເຝິກທັກສະ ການເວົ້າ ແລະ ທາສີຮູບພາບ.

**ກິດຈະກໍາ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄໍາຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ເຮົາຄວນປະຕິບັດຕົນແນວໃດໃນການເດີນທາງໃນທາງນໍ້າ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການປະຕິບັດຕົນໃນການເດີນທາງໃນທາງນໍ້າແມ່ນໄປໃຫ້ທັນເວລາ, ບໍ່ລົມກັນສຽງດັງ, ຂຶ້ນ ແລະ ລົງເຮືອຕາມລໍາດັບ, ບໍ່ຖິ້ມຂີ້ເຫຍື້ອຊະຊາຍ, ປະຕິບັດຕາມກົດລະບຽບຂອງການເດີນທາງໃນທາງນໍ້າ, ໃສ່ເສື້ອຊູຊີບ, ນັ່ງ, ຈັບໃຫ້ແໜ້ນ ແລະ ບໍ່ເອົາມືຈຸ່ມນໍ້າ.
- ໃຫ້ເດັກນ້ອຍທາສີຮູບພາບເຮືອ ແລະ ຄົນໂດຍນໍາໃຊ້ສີຕາມໃຈ.

# ການສື່ສານ










**ຫົວຂໍ້ການຮຽນອາທິດທີ 3 ການສື່ສານ**

1. ປະເພດຂອງການສື່ສານ.
2. ໂທລະສັບຕັ້ງໂຕະ.
3. ໂທລະພາບ.
4. ຄອມພິວເຕີ.
5. ຈົດໝາຍ.

# ປະເພດຂອງການສື່ສານ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກປະເພດຂອງການສື່ສານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ການສື່ສານມີປະເພດໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການສື່ສານມີການສື່ສານທາງດຽວ ແລະ ການສື່ສານ 2 ທາງ; ການສື່ສານທາງດຽວມີການຟັງວິທະຍຸ, ການເບິ່ງໂທລະພາບ, ການຟັງໂທລະໂຄ່ງ, ຈົດໝາຍ, ໜັງສືພິມ ແລະ ອິນເຕີເນດ; ການສື່ສານ 2 ທາງມີການລົມໂທລະສັບ, ການໂອ້ລົມສົນທະນາ, ການສົ່ງຂໍ້ຄວາມຫາກັນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ສ່ວນປະກອບ, ຄຸນປະໂຫຍດຂອງໂທລະສັບຕັ້ງໂຕະ ແລະ ການປະຕິບັດຕົນ






**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນປະກອບ, ຄຸນປະໂຫຍດຂອງໂທລະສັບຕັ້ງໂຕະ ແລະ ການປະຕິບັດຕົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຢູ່ເຮືອນຂອງຫຼານມີ ໂທລະສັບຕັ້ງໂຕະບໍ? ສ່ວນປະກອບຂອງໂທລະສັບຕັ້ງໂຕະມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສ່ວນປະກອບຂອງໂທລະສັບຕັ້ງໂຕະມີປຸ່ມກົດຕົວເລກ, ຫູຟັງໂທລະສັບ, ສາຍປັກສຽບໄຟ; ມີຄຸນປະໂຫຍດສາມາດສື່ສານກັນໄດ້ໄວໃນໄລຍະທາງໃກ້-ໄກ; ຄວນປະຕິບັດຕົນໃນເວລາລົມໂທລະສັບຕ້ອງໃຊ້ຄຳເວົ້າສຸພາບ, ບໍ່ເວົ້າຫຍາບຄາຍ.
- ໃຫ້ເດັກນ້ອຍທາສີຮູບພາບໂທລະສັບ ແລະ ຄົນໂດຍນຳໃຊ້ສີຕາມໃຈ.

# ໂທລະພາບ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນປະກອບຂອງໂທລະພາບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຢູ່ເຮືອນຂອງຫຼານມີໂທລະພາບບໍ? ສ່ວນປະກອບຂອງໂທລະພາບມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສ່ວນປະກອບຂອງໂທລະພາບມີຈໍພາບ, ລຳໂພງ, ສາຍປັກສຽບໄຟ, ປຸ່ມສະວິດປິດ- ເປີດ ແລະ ລີໂໝດ.
- ໃຫ້ເດັກນ້ອຍທາສີຮູບພາບໂທລະພາບໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງໂທລະພາບ ແລະ ການປະຕິບັດຕົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງໂທລະພາບ ແລະ ການປະຕິບັດຕົນໃນເວລາເບິ່ງໂທລະພາບ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ໂທລະພາບໃຊ້ໄວ້ ເຮັດຫຍັງ? ໃນເວລາເບິ່ງໂທລະພາບຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງໂທລະພາບໃຊ້ເບິ່ງລາຍການສາລະຄະດີ, ລະຄອນ, ເພງ, ຂ່າວພາຍໃນ, ຂ່າວຕ່າງປະເທດ; ການປະຕິບັດຕົນໃນເວລາເບິ່ງໂທລະພາບບໍ່ໃຫ້ເປີດສຽງດັງເກີນໄປ, ຄວນເບິ່ງໃນບ່ອນທີ່ມີແສງສະຫວ່າງພຽງພໍ, ບໍ່ນັ່ງໃກ້ໜ້າຈໍດົນເກີນໄປ.
- ໃຫ້ເດັກນ້ອຍທາສີຮູບພາບຄົນ ແລະ ໂທລະພາບໂດຍນຳໃຊ້ສີຕາມໃຈ.

# ຄອມພິວເຕີ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກສ່ວນປະກອບຂອງຄອມພິວເຕີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຢູ່ເຮືອນຂອງຫຼານມີຄອມພິວເຕີບໍ? ສ່ວນປະກອບຂອງຄອມພິວເຕີມີຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ສ່ວນປະກອບຂອງຄອມິວເຕີມີຈໍ, ລຳໂພງ, ຄີບອດ, ເມົ້າ, ຮາດດິດ.
- ໃຫ້ເດັກນ້ອຍທາສີຮູບພາບຄອມພິວເຕີໂດຍນຳໃຊ້ສີຕາມໃຈ.

# ຄຸນປະໂຫຍດຂອງຄອມພິວເຕີ ແລະ ການປະຕິບັດຕົນ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກຄຸນປະໂຫຍດຂອງຄອມພິວເຕີ, ການປະຕິບັດຕົນໃນເວລາໃຊ້ ຄອມພິວເຕີ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຄອມພິວເຕີໃຊ້ໄວ້ເຮັດຫຍັງ? ການປະຕິບັດຕົນໃນການໃຊ້ຄອມພິວເຕີຄວນເຮັດແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ຄຸນປະໂຫຍດຂອງຄອມພິວເຕີໃຊ້ໄວ້ພິມເອກະສານຕ່າງໆ, ບັນທຶກຂໍ້ມູນຕ່າງໆໄດ້ຫຼາຍ ແລະ ວ່ອງໄວ; ການປະຕິບັດຕົນໃນການໃຊ້ຄອມພິວເຕີບໍ່ຄວນນັ່ງຢູ່ໜ້າຄອມພິວເຕີດົນເກີນໄປ, ໃຊ້ແລ້ວໃຫ້ປິດໄວ້.
- ໃຫ້ເດັກນ້ອຍທາສີຮູບພາບຄືນໂດຍນຳໃຊ້ສີຕາມໃຈ.

# ຈົດໝາຍ




**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກລັກສະນະ, ຄຸນປະໂຫຍດຂອງຊອງຈົດໝາຍ, ການປະຕິບັດຕົນໃນການສົ່ງຈົດໝາຍ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຊອງຈົດໝາຍມີລັກສະນະແນວໃດ? ຊອງຈົດໝາຍໃຊ້ໄວ້ເຮັດຫຍັງ? ຄວນປະຕິບັດຕົນແນວໃດໃນການສົ່ງຈົດໝາຍ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ລັກສະນະຂອງຊອງຈົດໝາຍເປັນຮູບສີ່ແຈ, ຊອງສັ້ນ, ຊອງຍາວ; ຄຸນປະໂຫຍດຂອງຈົດໝາຍສາມາດຮູ້ຂ່າວຄາວເຊິ່ງກັນ ແລະ ກັນ; ການປະຕິບັດຕົນຕ້ອງບໍ່ຈີກຊອງຈົດໝາຍຂອງຜູ້ອື່ນ, ຕ້ອງສົ່ງຈົດໝາຍໃຫ້ເຖິງມືເຈົ້າຂອງ.
- ໃຫ້ເດັກນ້ອຍທາສີຮູບພາບຊອງຈົດໝາຍໂດຍນຳໃຊ້ສີຕາມໃຈ.

# ການປະຕິບັດຕົນໃນເວລາສື່ສານ











**ຫົວຂໍ້ການຮຽນອາທິດທີ 4 ການປະຕິບັດຕົນໃນເວລາສື່ສານ:**

1. ການເວົ້າ.
2. ການຟັງ.
3. ການອ່ານ.
4. ການຂຽນ.
5. ການແຕ້ມ.

# ການເວົ້າ



**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກບຸກຄະລິກ, ມາລະຍາດໃນການເວົ້າ, ການປະຕິບັດຕົນ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ບຸກຄະລິກໃນການໃຊ້ທ່າທາງ, ນ້ຳສຽງໃນເວລາເປັນໂຄສົກຄວນເຮັດແນວໃດ? ຄວນມີມາລະຍາດໃນການເວົ້າແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ບຸກຄະລິກມີທ່າທາງ ແລະ ນ້ຳສຽງ; ທ່າທາງເປັນໂຄສົກ, ເປັນພິທີກອນ; ນ້ຳສຽງມີສຽງແຮງ, ສຽງຄ່ອຍ; ມາລະຍາດໃນການເວົ້າ ແມ່ນຕ້ອງເວົ້າສຽງອ່ອນຫວານ, ເວົ້າຈາສຸພາບ, ບໍ່ເວົ້າໄວເກີນໄປ, ເວົ້າຈະແຈ້ງຊັດເຈນ, ບໍ່ຍາດກັນເວົ້າ ແລະ ບໍ່ເວົ້າຕັດຄວາມຜູ້ອື່ນ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການຟັງ







**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຟັງ ແລະ ທ່າທາງປະກອບໃນການຟັງ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງແດ່? ເວລານາຍຄູເວົ້າຫຼານຄວນເຮັດແນວໃດ? ຫຼານເຄີຍຟັງຫຍັງແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຟັງມີຟັງນິທານ, ຟັງເພງ, ຟັງຄຳຄ່ອງ; ທ່າທາງປະກອບໃນການຟັງນິທານແມ່ນສົນທະນາຖາມ-ຕອບກ່ຽວກັບເນື້ອໃນນິທານ, ຟັງເພງເຕັ້ນ, ຟ້ອນຕາມຈັງຫວະເນື້ອໃນເພງ, ຟັງຄຳຄ່ອງສະແດງທ່າທາງປະກອບ.
- ໃຫ້ເດັກນ້ອຍທາສີຮູບພາບຄືນໂດຍນຳໃຊ້ສີຕາມໃຈ.

# ການອ່ານ





**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການອ່ານ ແລະ ປະຕິບັດຕົນໃນການອ່ານ; ເຝິກທັກສະການເວົ້າ ແລະ ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ຫຼານເຄີຍອ່ານຫຍັງແດ່? ຄວນປະຕິບັດຕົນໃນ ການອ່ານແນວໃດ?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການອ່ານແມ່ນອ່ານຕາມຮູບພາບ ແລະ ບັດຄຳ; ການປະຕິບັດຕົນໃນການອ່ານໃຫ້ຈະແຈ້ງ, ຕັ້ງໃຈອ່ານ, ບໍ່ລົບກວນ ໝູ່ໃນເວລາອ່ານ, ເປີດປຶ້ມຄ່ອຍໆ, ອ່ານແລ້ວເກັບມ້ຽນເປັນລະບຽບ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.

# ການຂຽນ ແລະ ການແຕ້ມ











**ຈຸດປະສົງ:** ເພື່ອໃຫ້ເດັກນ້ອຍບອກການຂຽນ ແລະ ການແຕ້ມ; ເຝິກທັກສະການເວົ້າ ແລະ ຂຽນ; ທາສີຮູບພາບ.

**ກິດຈະກຳ:**

- ໃຫ້ເດັກນ້ອຍສັງເກດເບິ່ງຮູບພາບ ແລະ ຕອບຄຳຖາມດັ່ງນີ້: ໃນຮູບນີ້ຫຼານເຫັນຫຍັງ? ການຂຽນ ແລະ ການແຕ້ມມີແບບໃດແດ່?
- ໃຫ້ເດັກນ້ອຍ ແລະ ຄູສະຫຼຸບ: ການຂຽນປະກອບມີຂຽນຕາມແບບ ແລະ ຂຽນເອງ. ການແຕ້ມມີແຕ້ມຕາມແບບ, ຕາມຈິນຕະນາການ ໂດຍບໍ່ໃຫ້ເຈ້ຍເປື້ອນ ແລະ ຂາດ.
- ໃຫ້ເດັກນ້ອຍທາສີຮູບພາບເດັກນ້ອຍໂດຍນຳໃຊ້ສີຕາມໃຈ.